British Embassy
Vientiane

ສະຖານທູດອັງກິດ ປະຈຳນະຄອນຫຼວງວຽງຈັນ
ຖະໜົນ ເນຣູ
ບ້ານ ໂພນໄຊ,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)30 770 0000
BritishEmbassy.Vientiane@fco.gov.uk

# <u>ບົດຂ່າວ</u>

ວັນຈັນ, 23 ມິນາ 2015 | ສຳລັບອອກຂ່າວໄດ້ທັນທີ

## ສະຫະລາຊະອານາຈັກອັງກິດ ຮ່ວມກັບ ທະນາຄານ ແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ຖານທູດອັງກິດ ແລະ ທະນາຄານແຫ່ງ ສ. ປ. ປ. ລາວ ຮ່ວມເປັນເຈົ້າພາບຈັດກອງປະຊຸມ ເຜີຍແຜ່ ກົດຫມາຍໃຫມ່ວ່າດ້ວຍ ການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.**

ໃນວັນຈັນ 23 ມີນາ, ທ່ານເອກອັກຄະລາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງສະຫະລາຊະອານາຈັກອັງກິດ ປະຈຳ ສ.ປ.ປ. ລາວ ຟີນລິບ ມາໂລນ ແລະ ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສ.ປ.ປ. ລາວ (ທຫລ), ທ່ານ ພັນທະບູນ ໄຊຍະເພັດ ຮ່ວມເປັນປະທານກອງປະຊຸມເປັນເວລາຫນຶ່ງມື້ເພື່ອເຜີຍແຜ່ກົດຫມາຍໃຫມ່ວ່າດ້ວຍ ການຕ້ານ ການສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໂຮງແຮມເມີຄຽວ ວຽງຈັນ.

ກົດຫມາຍວ່າດ້ວຍ ການຕ້ານ ການສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ານການຟອກເງິນ ແລະ ການສະກັດກັ້ນການເງິນການກໍ່ການຮ້າຍ ແມ່ນກົດໝາຍສະບັບທຳອິດທີ່ກ່ຽວກັບການຕ້ານການຟອກເງິນ ເຊິ່ງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ໃນເດືອນກໍລະກົດປີ 2014 ແລະ ຕໍ່ມາໄດ້ປະກາດໃຊ້ຢ່າງເປັນທາງການໂດຍລັດຖະບານ ສ.ປ.ປ ລາວ. ກົດຫມາຍໃຫມ່ໄດ້ເພີ່ມຄວາມເຂັ້ມແຂງທາງດ້ານນິຕິກຳຂອງ ສ.ປ.ປ.ລາວ ເຊິ່ງຈະເພີ່ມປະສິດທິຜົນໃນການຈັດການກັບບັນຫາການຕ້ານ ສະກັດກັ້ນ ແລະ ການສະໜອງທຶນໃຫ້ການກໍ່ການຮ້າຍ ກົດໝາຍດັ່ງກ່າວ ເປັນນິຕິກຳໜຶ່ງທີ່ສຳຄັນເພື່ອເຮັດໃຫ້ ສ. ປ . ປ. ລາວ ເຂົ້າສູ່ລະບົບກົດໝາຍ ແລະ ຫລັກການສາກົນ ໃນຂົງເຂດດັ່ງກ່າວ ເຊິ່ງເປັນສິ່ງທີ່ສຳຄັນ ໃນການພັດທະນາເສດຖະກິດ ສ. ປ. ປ. ລາວ ລວມທັງການເຂົ້າຮ່ວມອາຊຽນເສດຖະກິດໃນປີ 2015.

ໃນລະຫວ່າງການເປີດພິທີ, ທ່ານ ຟີລິບ ມາໂລນ ໄດ້ກ່າວວ່າ:

"ສະຖານທູດອັງກິດໄດ້ມີຄວາມພະຍາຍາມ ໃນການເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງຂອງລັດຖະບານ ແຫ່ງ ສ. ປ. ປ. ລາວ ໃນໂຊງເຂດວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

"ພວກເຮົາມີຄວາມສົນໃຈວຽກງານດັ່ງກ່າວ ຍ້ອນວ່າພວກເຮົາເຊື່ອວ່າ ການລະບຽບການທີ່ດີ, ມີຄວາມໂປ່ງໃສ ແລະ ເຈົ້າໜ້າທີ່ ມີຄຸນນະພາບ ຂອງຂະແໜງການທາງດ້ານການເງິນເປັນສິ່ງສໍາຄັນ ໃນການປະສົບຄວາມສໍາເລັດທາງດ້ານເສດຖະກິດ. ນັກລົງທຶນຕ້ອງການ ການຮັບປະກັນ ຄວາມປອດໄພ ແລະ ຄວາມແນ່ນອນ ໃນຂະບວນການພິຈາລະນາຕັດສິນໃຈໃນການລົງທຶນ. "

ກອງປະຊຸມເຜີຍແຜ່ກົດໝາຍດັ່ງກ່າວ ຈະຊ່ວຍໃຫ້ຂະແໜງການທີ່ກ່ຽວຂ້ອງເຂົ້າໃຈເນື້ອໃນກົດໃຫມ່ ແລະ ປະກອບສ່ວນໃນການປະຕິບັດຕາມກົດໝາຍ.

ກອງປະຊຸມດັ່ງກ່າວເປັນ ສ່ວນໜຶ່ງຂອງການຊ່ວຍເຫຼືອຈາກລັດຖະບານແຫ່ງລາຊະອານາຈັກອັງກິດ ໃຫ້ແກ່ລັດຖະບານແຫ່ງ ສ.ປ.ປ. ລາວ ໃນດ້ານການຕ້ານການຟອກເງິນ.

ໂຄງການດັ່ງກ່າວ ເປັນໜຶ່ງໃນຈຸດປະສົງຫລັກຂອງລັດຖະບານອັງກິດໃນການຮ່ວມງານກັບບັນດາພາກສ່ວນຕ່າງໆ ເພື່ອເປັນການຊຸກຍູ້ໃຫ້ແກ່ ການປັບປຸງສະພາບແວດລ້ອມທາງດ້ານການດໍາເນີນທຸລະກິດ ຢູ່ ສ.ປ.ປ. ລາວ ທີ່ອີງໃສ່ຫຼັກແຫ່ງກົດໝາຍຂອງລະບົບເສດຖະກິດສາກົນ.

**ຕິດຕໍ່ພົວພັນ:**
Tracy Brookshaw**,** Communications and Policy Officer
British Embassy Vientiane. Email: tracy.brookshaw@fco.gov.uk Tel: 020 9554 0271